**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**
*************

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ　　　　　　　　　ເລກທີ: 10 /ສພທ.ທຄຕລ
ນະຄອນຫຼວງວຽງຈັນ, ວັນທີ: 28/04/2021

# ມະຕິ
# ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝວິສາມັນ
# ວັນທີ 27/04/2021

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝວິສາມັນຄັ້ງທີ 04 ປະຈຳປີ 2021 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 14:00-15:45 ໂມງ ວັນທີ 27/04/2021 ເຊິ່ງເປັນກອງປະຊຸມອອນລາຍຜ່ານລະບົບ Zoom, ໂດຍການເປັນປະທານຂອງ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານເຂົ້າຮ່ວມຄົບ ແລະ ມີຜູ້ສັງເກດການເຂົ້າຮ່ວມຈຳນວນໜຶ່ງ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:**

1. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງການອະນຸມັດສິນເຊື່ອໃຫ້ລູກຄ້າທຸລະກິດລາຍໃຫຍ່ຈຳນວນ 2 ລາຍການ ແລະ ຮັບຮອງການປັບປຸງໂຄງສ້າງ 1 ລາຍການ;
2. ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງການອອກລາຍຈ່າຍຊຸກຍູ້ວຽກງານການປ້ອງກັນການລະບາດຂອງພະຍາດໂຄວິດ 19 ໃຫ້ແກ່ລັດຖະບານ ຈຳນວນ 500 ລ້ານກີບ;
3. ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີຮັບຮອງໃຫ້ສະພາບໍລິຫານຊຸດປະຈຸບັນສືບຕໍ່ປະຕິບັດໜ້າທີ່ໄປຈົນກວ່າ ສະພາບໍລິຫານຊຸດໃໝ່ໄດ້ຮັບການແຕ່ງຕັ້ງຈາກກອງປະຊຸມຜູ້ຖືຮຸ້ນ; ສຳລັບການສະເໜີແຕ່ງຕັ້ງສະພາບໍລິຫານຊຸດໃໝ່ທີ່ ທຄຕລ ໄດ້ບັນຈຸຢູ່ໃນວາລະກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020 ໃຫ້ເລື່ອນໄປໃສ່ກອງປະຊຸມຜູ້ຖືຮຸ້ນຄັ້ງຕໍ່ໄປ ເນື່ອງຈາກຍັງຢູ່ໃນລະຫວ່າງການຂໍຮັບຮອງຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍທະນາຄານທຸລະກິດ;
4. ກອງປະຊຸມໄດ້ພິຈາລະນາ ແລະ ເຫັນດີຮັບຮອງໃຫ້ ທຄຕລ ສືບຕໍ່ ເປີດກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020 ຂອງ ທຄຕລ ຕາມແຜນທີ່ວາງໄວ້, ບົນພື້ນຖານການປະຕິບັດມາດຕະການປ້ອງກັນການລະບາດຂອງພະຍາດໂຄວິດ 19, ຊຸກຍູ້ໃຫ້ຜູ້ຖືຮຸ້ນ ມອບສິດໃຫ້ສະມາຊິກສະພາບໍລິຫານອິດສະຫຼະຂອງ ທຄຕລ;
5. ກອງປະຊຸມໄດ້ເຫັນດີມອບໃຫ້ ທ່ານ ຄຳສຸກ ສູນດາລາ ເປັນປະທານກອງປະຊຸມຜູ້ຖືຮຸ້ນປະຈຳປີ 2020 ແທນທ່ານປະທານສະພາບໍລິຫານທີ່ຕິດພາລະກິດໃນວັນດັ່ງກ່າວ.

**ປະທານສະພາບໍລິຫານ**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**



ບຸນເຫຼືອ ສິນໄຊວໍຣະວົງ